ເຊັ່ນ: ການກຳນົດເງື່ອນໄຂໃນການສ້າງຕັ້ງ ແລະ ເຄື່ອນໄຫວ, ເງື່ອນໄຂຮັກສາຄັງສຳຮອງ, ອັດຕາສ່ວນສະພາບຄ່ອງ ແລະ ການລາຍງານສະພາບການເງິນຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນຕ່າງໆ; ແຕ່ມາດຕະການດັ່ງກ່າວຄວນດຳເນີນບົນພື້ນຖານບໍ່ມີການຈຳແນກປະຕິບັດຕໍ່ຜູ້ສະໜອງການບໍລິການ ຫຼື ການບໍລິການຈາກແຫຼ່ງ/ສະມາຊິກໃດໜຶ່ງ. ສັນຍາ GATS ຍັງໃຫ້ສິດແກ່ສະມາຊິກໃນການດຳເນີນນະໂຍບາຍດ້ານສັງຄົມເຊັ່ນ: ນະໂຍບາຍດອກເບ້ຍພິເສດສຳລັບ ຊາວກະສິກອນ ຫຼື ເພື່ອສົ່ງເສີມການເຂົ້າເຖິງແຫຼ່ງເງິນທຶນຂອງທຸລະກິດຂະໜາດນ້ອຍໃນເຂດຫ່າງໄກສອກຫຼີກ. ເຊັ່ນດຽວກັນ, ນະໂຍບາຍດັ່ງກ່າວຄວນດຳເນີນບົນພື້ນຖານຫຼັກການບໍ່ຈຳແນກປະຕິບັດ. ນອກນີ້, ຍ້ອນລັກສະນະຈຳເພາະຂອງຂະແໜງການເງິນ, ໃນກໍລະນີທີ່ປະສົບວິກິດການເສດຖະກິດການເງິນຮຸນແຮງ ສະມາຊິກອາດອາໄສຂໍ້ຍົກເວັ້ນເພື່ອຮັກສາສະຖຽນລະພາບທາງການເງິນ (Prudential carveout) ໂດຍສາມາດຢຸດຕິ ຫຼື ເພີກຖອນຂໍ້ຜູກພັນທີ່ໄດ້ພັນທະແກ່ສະມາຊິກອື່ນເປັນການຊົ່ວຄາວໄດ້ ດັ່ງທີ່ ສະຫະລັດ ອາເມລິກາ ແລະ ຫຼາຍໆປະເທດ ກຳລັງນຳໃຊ້ ເພື່ອຮັບມືກັບວິກິດການ ການເງິນໂລກ ທີ່ໄດ້ເລີ່ມຕົ້ນນັບແຕ່ທ້າຍປີ 2007 ເປັນຕົ້ນມາ.

## ການເປີດຂະແໜງບໍລິການການເງິນຂອງ ສປປ ລາວ

ສປປ ລາວ ໄດ້ເຈລະຈາເປີດຂະແໜງບໍລິການການເງິນ ໃນຫຼາຍຂົງເຂດ ລວມທັງສັນຍາການຄ້າສອງຝ່າຍ, ພາກພື້ນ (ອາຊຽນ, ຄູ່ເຈລະຈາອາຊຽນ) ແລະ ຫຼາຍຝ່າຍ ຊຶ່ງໂດຍລວມແລ້ວ ການເຈລະຈາດັ່ງກ່າວ ລ້ວນແຕ່ອີງໃສ່ສັນຍາ GATS ເປັນແມ່ບົດ. ໃນນີ້, ໃນການເຈລະຈາຫຼາຍຝ່າຍ ກໍຄືການເຂົ້າເປັນສະມາຊິກ WTO ສປປ ລາວ ຖືກຮຽກຮ້ອງໃຫ້ເປີດຂະແໜງບໍລິການການເງິນເຊັ່ນດຽວກັບປະເທດສະໝັກເຂົ້າເປັນສະມາຊິກໃຫມ່ອື່ນໆ ຕົ້ນຕໍແມ່ນຂະແໜງປະກັນໄພ ແລະ ທະນາຄານ.

ປະຈຸບັນມີສອງພາກສ່ວນຕົ້ນຕໍ ທີ່ຄຸ້ມຄອງຂະແໜງການເງິນ:

1. ກະຊວງການເງິນ ຮັບຜິດຊອບຂະແໜງປະກັນໄພ ແລະ
2. ທະນາຄານແຫ່ງ ສປປ ລາວ ຮັບຜິດຊອບຂະແໜງທະນາຄານ ແລະ ຕະຫຼາດຫຼັກຊັບ.

ຂະແໜງການອື່ນ ກໍມີສ່ວນຮ່ວມໃນການຄຸ້ມຄອງບາງສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ. ນິຕິກຳຄຸ້ມຄອງຂະແໜງເຫຼົ່ານີ້ ທີ່ສຳຄັນປະກອບດ້ວຍ: ກົດໝາຍປະກັນໄພ (2011) ແລະ ດຳລັດຈັດຕັ້ງປະຕິບັດ ຊຶ່ງກະຊວງການເງິນ ກຳລັງປັບປຸງເພື່ອໃຫ້ທັນກັບສະພາບການ ແລະ ຄວາມຮຽກຮ້ອງຕ້ອງການໃນການເຊື່ອມໂຍງເສດຖະ ກິດກັບພາກພື້ນ ແລະ ສາກົນ ໃນໄລຍະໃໝ່. ພ້ອມນີ້, ລັດຖະບານໄດ້ອອກກົດ ໝາຍທະນາຄານທຸລະກິດ (ປີ 2006) ເພື່ອສົ່ງເສີມ ແລະ ດຶງດູດການລົງທຶນໃນຂະແໜງທະນາຄານ ຈາກຕ່າງປະເທດ ທັງໃນຮູບການການຮ່ວມທຶນ, ສ້າງຕັ້ງສາຂາ ຫຼື ສ້າງຕັ້ງສຳນັກງານຜູ້ຕາງໜ້າ. ນອກນັ້ນ, ກໍກຳລັງກະກຽມຍົກດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບໃຫ້ເປັນກົດໝາຍ ເພື່ອສ້າງຕະຫຼາດທຶນ ທີ່ມີປະສິດທິພາບ, ໃຫ້ການບໍລິການຫຼາຍຮູບແບບ, ບໍລິການດ້ວຍລະບົບທັນສະໄໝ ແນໃສ່ເຮັດໃຫ້ຕະຫຼາດທຶນກາຍເປັນບ່ອນ ສະໜັບສະໜູນການລະດົມທຶນ ໄລຍະກາງ- ຍາວ.


**ສົນໃຈຂໍ້ມູນເພີ່ມຕື່ມ**

ກົມນະໂຍບາຍການຄ້າຕ່າງປະເທດ

ກະຊວງອຸດສາຫະກຳ ແລະ ການຄ້າ

Tel/Fax: 021-450066

ອີເມລ: foreigntrade@laoftpd.com

ເວັບໄຊ: www.laoftpd.com



**ສະໜັບສະໜູນໂດຍ:**

USAID
FROM THE AMERICAN PEOPLE


WORLD TRADE ORGANIZATION

# ການບໍລິການ ດ້ານການເງິນ





# ການບໍລິການ

## ຂະແໜງການເງິນ

### ສະພາບລວມ

**ລະບົບສະຖາບັນການເງິນ** ປະກອບດ້ວຍ ທະນາຄານ, ສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ, ສະຖາບັນ ການເງິນຈຸລະພາກ, ຕະຫຼາດເງິນ ແລະ ຕະຫຼາດທຶນ. ລັດຖະບານລາວ ພະຍາຍາມສ້າງຄວາມເຂັ້ມແຂງດ້ານນິຕິກຳ ແລະ ການຄຸ້ມຄອງ ພ້ອມທັງເປີດກວ້າງການລົງທຶນ ໂດຍສະເພາະ ນັບແຕ່ປີ 2006 ເປັນຕົ້ນມາ ມີການຮ່ວມທຶນ ແລະ ລົງທຶນສ້າງຕັ້ງທະນາຄານທຸລະກິດ ແລະ ບໍລິສັດປະກັນໄພ ຈາກພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດ ຢ່າງຫຼວງຫຼາຍ. ໃນປີ 2011, ມີທະນາຄານທຸລະກິດຂອງລັດ 3 ແຫ່ງ, ສະເພາະກິດ 1 ແຫ່ງ, ຮ່ວມທຶນ 2 ແຫ່ງ, ລົງທຶນເອກະຊົນ 4 ແຫ່ງ ແລະ ສາຂາຂອງຕ່າງປະເທດ 11 ແຫ່ງ. ທະນາຄານທຸລະກິດ ມີສາຂາທັງໝົດກວ່າ 70 ແຫ່ງ ໃນທົ່ວປະເທດ. ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ປະກອບດ້ວຍອົງການປະກັນສັງຄົມ, ບໍລິສັດປະກັນໄພ 6 ແຫ່ງ, ສະຖາບັນເງິນຝາກໄປສະນີ 16 ສາຂາ, ແລະ ໂຮງຊວດຈຳ 28 ແຫ່ງ. ພົ້ນເດັ່ນທີ່ສຸດ ແມ່ນການສ້າງຕັ້ງຕະຫຼາດຫຼັກຊັບໃນທ້າຍປີ 2010.

ລະບົບສະຖາບັນການເງິນຂອງລາວ ຖືວ່າຍັງອ່ອນນ້ອຍເມື່ອສົມທຽບກັບປະເທດຂ້າງຄຽງ. ການພັດທະນາລະບົບດັ່ງກ່າວລວມທັງນິຕິກຳຄຸ້ມຄອງ ກໍຍັງບໍ່ທັນຄົບຊຸດ, ເຮັດໃຫ້ເກີດມີຄວາມຫຼຸດໂຕນກັນຢ່າງຊັດເຈນ ໂດຍໃນນີ້ ລະບົບທະນາຄານຂ້ອນຂ້າງໄດ້ຮັບການພັດທະນາ ແລະ ມີບົດບາດສູງກວ່າໝູ່. ໃນຂະນະທີ່ສະຖາບັນການເງິນຈຸລະພາກ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຍັງມີບົດບາດໜ້ອຍ ຊຶ່ງອັດຕາສ່ວນຊັບສິນ ໃນຂະແໜງການກວມເອົາ 3,3% ໃນປີ 2008. ຄວາມອ່ອນນ້ອຍ ແລະ ພັດທະນາທີ່ຍັງລ່າຊ້າດັ່ງກ່າວ ເປັນອຸປະສັກໜຶ່ງຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ທັງຍັງເຮັດໃຫ້ເສດຖະກິດມະຫາພາກມີຄວາມອ່ອນໄຫວຕໍ່ຜົນກະທົບຕ່າງໆ ທັງຈາກ ພາຍໃນ ແລະ ຕ່າງປະເທດ. ດັ່ງນັ້ນ, ລັດຖະບານ ຈຶ່ງໄດ້ສ້າງຍຸດທະສາດພັດທະນາລະບົບສະຖາບັນການເງິນ ແຕ່ປີ 2009-2020 ຂຶ້ນ ເພື່ອເຮັດໃຫ້ລະບົບສະຖາບັນການເງິນ ໄດ້ຮັບການພັດທະນາຢ່າງເປັນລະບົບຄົບຊຸດແນໃສ່ໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງຍືນຍົງ ແລະ ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ຢ່າງປະສິບຜົນສຳເລັດ.

### ການບໍລິການດ້ານການເງິນ.

ສັນຍາທົ່ວໄປວ່າດ້ວຍການຄ້າດ້ານການບໍລິການ (General Agreement on Trade in Services: GATS) ໄດ້ຖືກເຈລະຈາ ແລະ ສ້າງເປັນສັນຍາສະເພາະ ພາຍຫຼັງທີ່ອົງການການຄ້າໂລກ (World Trade Organization: WTO) ໄດ້ຮັບການສ້າງຕັ້ງໃນປີ 1995. ສັນຍາ GATS ຈັດແບ່ງຂະແໜງບໍລິການດ້ານການເງິນ ເປັນ 3 ໝວດ ຄື: ການບໍລິການປະກັນໄພ (ປະກັນໄພຊີວິດ, ປະກັນໄພສຸຂະພາບ...), ການບໍລິການທະນາຄານ (ການຮັບ-ຝາກເງິນ, ການແລກປ່ຽນເງິນຕາ...) ແລະ ການເງິນອື່ນໆ (ການຊື້-ຂາຍຮຸ້ນ). ໃນນີ້, ການບໍລິການການເງິນຍັງຈັດແບ່ງອອກເປັນອີກ 16 ຂະແໜງຍ່ອຍ (ລາຍລະອຽດໃນ ກ່ອງ 1).

### ການຄ້າດ້ານການບໍລິການກັບນະໂຍບາຍແຫ່ງຊາດ

ສັນຍາ GATS ມີຈຸດປະສົງສົ່ງເສີມການຄ້າດ້ານການບໍລິການ ເພື່ອໃຫ້ມີການແຂ່ງຂັນ ພາຍໃຕ້ຫຼັກການຮັບປະກັນຄວາມສະເໝີພາບ, ໂປ່ງໃສ ແລະ ເປັນທຳ ຊຶ່ງສັນຍາດັ່ງກ່າວ ກຳນົດຫຼັກການພື້ນຖານ ຄື: ການປະຕິບັດແບບຊາດໄດ້ຮັບອະນຸເຄາະຍິ່ງ (Most-favoured nations: MFN) ຊຶ່ງຜູ້ສະໜອງກໍຄືການບໍລິການຈາກສະມາຊິກ WTO ທັງໝົດ ຈະໄດ້ຮັບການປະຕິບັດທຽບເທົ່າກັນຈາກບັນດາສະມາຊິກດ້ວຍກັນ. ນອກນີ້, ຍັງມີຫຼັກການຄວາມໂປ່ງໃສ (Transparency) ຊຶ່ງແມ່ນພັນທະຂອງແຕ່ລະສະມາຊິກທີ່ຕ້ອງເຜີຍແຜ່ລະບຽບ ແລະ ມາດຕະການ ທີ່ສົ່ງຜົນຕໍ່ການຄ້າດ້ານການບໍລິການໃຫ້ທຸກພາກສ່ວນໄດ້ຮັບຮູ້ ພ້ອມທັງກຳນົດໃຫ້ມີການ ສ້າງຕັ້ງຈຸດສະໜອງຂໍ້ມູນເພື່ອໃຫ້ພາກລັດ ແລະ ພາກທຸລະກິດສາມາດຕິດຕໍ່ສອບຖາມຂໍ້ມູນກ່ຽວກັບນະໂຍບາຍ ແລະ ລະບຽບການ ຄຸ້ມຄອງຂະແໜງການເງິນຂອງສະມາຊິກໃດໜຶ່ງ.

ສັນຍາ GATS ກຳນົດພັນທະໃຫ້ແຕ່ລະສະມາຊິກ ເພື່ອເປັນຂອບໃນການສົ່ງເສີມການຄ້າລະຫວ່າງປະເທດ. ເຖິງຢ່າງໃດກໍຕາມ, ສັນຍານີ້ບໍ່ໄດ້ຈຳກັດສິດລັດຖະບານໃນການດຳເນີນນະໂຍບາຍ ເພື່ອບັນລຸຈຸດປະສົງຂອງຊາດ. ສັນຍາ GATS ກຳນົດວ່າການບໍລິການຂອງລັດ (Governmental services) ແມ່ນບໍ່ກວມໃນຂອບເຂດຂອງສັນຍາ ໝາຍເຖິງ ການບໍລິການທີ່ດຳເນີນໂດຍບໍ່ມີການແຂ່ງຂັນກັບຫົວໜ່ວຍສະໜອງບໍລິການອື່ນ ຫຼື ບໍ່ມີຈຸດປະສົງເພື່ອການຄ້າ; ຕົວຢ່າງ: ການບໍລິການຂອງລັດ, ການດຳເນີນນະໂຍບາຍອັດຕາດອກເບ້ຍ ແລະ ການຮັກສາສະຖຽນລະພາບຂອງເງິນຕາ. ພ້ອມນີ້, ສັນຍາ GATS ຍັງອະນຸຍາດໃຫ້ສະມາຊິກວາງລະບຽບການຄຸ້ມຄອງພາຍໃນ (Domestic regulations)

#### ກ່ອງ 1: ການຈັດແບ່ງຂະແໜງບໍລິການການເງິນ

ກ. ການບໍລິການປະກັນໄພ

i. ການປະກັນທາງກົງ (ລວມທັງ ການປະກັນໄພຮ່ວມ)
   (ກ) ການປະກັນໄພຊີວິດ;
   (ຂ) ບໍ່ແມ່ນການປະກັນໄພຊີວິດ.
ii. ການປະກັນໄພຕໍ່ ແລະ ຍ້ອນຫຼັງ.
iii. ສື່ກາງການປະກັນໄພ ເຊັ່ນ: ນາຍໜ້າ ແລະ ຕົວແທນ.
iv. ການບໍລິການສະໜັບສະໜູນການປະກັນໄພ ເຊັ່ນ: ທີ່ປຶກສາ, ການຄິດໄລ່ຄ່າທຳນຽມປະກັນໄພ, ການປະເມີນຄວາມສ່ຽງ ແລະ ການບໍລິການຮຽກການຊົດເຊີຍປະກັນໄພ.

ຂ. ການບໍລິການທະນາຄານ

i. ການຮັບເງິນຝາກ ແລະ ກອງທຶນຊຳລະຄືນອື່ນໆ.
ii. ການປ່ອຍສິນເຊື່ອທຸກປະເພດ, ລວມທັງ ສິນເຊື່ອຜູ້ບໍລິໂພກ, ສິນເຊື່ອຈຳນອງ.
iii. ການເຊົ່າຊື້.
iv. ການຊຳລະ ແລະ ໂອນເງິນ ລວມທັງ ບັດເຄຣດິດ-ເດບິດ, ແຊັກເດີນທາງ ແລະ ການໂອນເງິນ.
v. ການຄ້ຳປະກັນ ແລະ ຂໍ້ຜູກພັນ.
vi. ການຄ້າບັນຊີຂອງຕົນ ຫຼື ບັນຊີລູກຄ້າ ລວມທັງ ດຳເນີນໃນຕະຫຼາດຂັ້ນຕົ້ນ ຫຼື ຂັ້ນສອງສຳລັບ.
   ກ) ເຄື່ອງມືຕະຫຼາດເງິນ (ແຊັກ, ບິນ, ທະນະບັດເງິນຝາກ ແລະ ອື່ນໆ);
   ຂ) ການແລກປ່ຽນເງິນຕາຕ່າງປະເທດ;
   ຄ) ອະນຸພັນການເງິນ ລວມທັງ ຟິວເຈີ ແລະ ອອບຊັນ;
   ງ) ເຄື່ອງມືອັດຕາແລກປ່ຽນ ແລະ ດອກເບ້ຍ ແລະ ອື່ນໆ ລວມທັງ ຜະລິດຕະພັນ ເຊັ່ນ: ສະວອບ, ສັນຍາອັດຕາລ່ວງໜ້າ ແລະ ອື່ນໆ;
   ຈ) ຫຼັກຊັບປ່ຽນມືໄດ້;
   ສ) ເຄື່ອງມື ແລະ ຫຼັກຊັບການເງິນເຈລະຈາໄດ້ອື່ນໆ ລວມທັງຄຳແທ່ງ ຫຼື ເງິນແທ່ງ (ບຸນລຽນ).

ຄ. ການບໍລິການການເງິນອື່ນໆ

i. ການມີສ່ວນຮ່ວມໃນການອອກຫຼັກຊັບທຸກປະເພດ ລວມທັງ ການອອກ ແລະ ສັນຫາໃນຖານະນາຍໜ້າ (ອາດເປັນສາທາລະນະ ຫຼື ເອກະຊົນ) ແລະ ການບໍລິການທີ່ກ່ຽວຂ້ອງກັບການອອກດັ່ງກ່າວ.
ii. ນາຍໜ້າເງິນ (Broker).
iii. ການຈັດການຊັບສິນ ເຊັ່ນ: ການຈັດການເງິນສົດ ຫຼື ຫຼັກຊັບ, ທຸກຮູບແບບການຈັດການກອງທຶນລວມ, ການຈັດການກອງທຶນບຳນານ, ການບໍລິການເງິນຝາກ ແລະ ກອງທຶນວາງໃຈ.
iv. ການຊຳລະສະສາງຊັບສິນການເງິນ ລວມທັງ ຫຼັກຊັບ ແລະ ອະນຸພັນການເງິນ.
v. ການສະໜອງ ແລະ ການໂອນຂໍ້ມູນການເງິນ ແລະ ການປະມວນຂໍ້ມູນການເງິນ ແລະ ຊອບແວທີ່ກ່ຽວຂ້ອງໂດຍຜູ້ສະໜອງການບໍລິການການເງິນອື່ນໆ.
vi. ທີ່ປຶກສາ ແລະ ການສະໜັບສະໜູນການເງິນອື່ນໆ ລວມທັງ ການອ້າງອີງ ແລະ ວິເຄາະສິນເຊື່ອ, ການວິໄຈ ແລະ ແນະນຳການລົງທຶນ ແລະ ເງິນທຶນ, ການແນະນຳການຄວບຊື້, ປັບໂຄງສ້າງ ແລະ ຍຸດທະສາດບໍລິສັດ.